G0107:10
T13/6

STATE LIBRARY COMMISSION OF IOWA
APR 12 1976

# ຂ່າວສານຊາວໄທດຳ

# TAI DAM NEWSLETTER

APRIL 1, 1976

Governor's Task Force for Indochinese Resettlement
523 E. 12th, Des Moines, Iowa 50319,
Toll free 800-362-2780

NO. 6

## INSURANCE

You have at least two reasons to buy life insurance : Your life and your health . You may also have a car or other possessions you wish to insure . Basically,insurance protects you and your family from unknown and unwanted catastrophes .

There are many reasons to buy life insurance . One is to protect anyone who depends on you for support such as children or elderly relatives.

Another reason for having life insurance is that it becomes a convenient way to borrow money . Buying life insurance allows you to build up a cash value . You can borrow this amount , or part of it , from the insurance company whenever you wish or for whatever reason you have .

A third reason is to prepare for retirement . Planning ahead for the years when you are no longer able to work may make them a lot happier for you .

Life insurance may be purchased from an agent or company , or sometimes at your place of employment . Good agents usually have good reputations , so when you are looking for one , ask your sponsor or employer for their recommendations . It is very important that you feel confident in your life insurance agent since he or she can become a valuable advisor , helping you to make important financial decisions .

Health insurance protects you from medical bills that would be too high for you to pay. By paying regularly for you insurance (usually you make a monthly payment), you can budget your medical care and not be trapped by unexpected and unmanageable expenses. Very few people indeed can afford the risk of not having health insurance. This is why most Americans have it.

Most people buy their health insurance through a 'group plan'. Group policies are available through employers or other organizations. Health insurance is also sold on an individual basis and may be obtained from an insurance agent or directly from an insurance company. Group policies tend to be less expensive and are open to all members of a group, but an individual policy may be tailored to suit your personal needs.

Health insurance plans vary widely. Basic protection plans insure you against the costs of ordinary hospital care, surgery and doctors services. Major medical plans, as the name implies, protect you in the case of serious or prolonged illness, paying for virtually every type of care and illness, in or out of the hospital.

Many people purchase both basic protection and major medical to have complete health coverage.

Any questions you have can be answered by a good agent or insurance representative where you work. But by all means, ask questions! Insurance isn't simple, but it isn't beyond comprehension either. Find out the specifics of available

insurance policies that meet your needs and fit your budget.

TRANSPORTATION: AMERICAN'S ON THE MOVE!

The automobile has shaped the way people live in the United States. Families use their cars to drive to work, to go shopping, to visit friends, and to see the country on annual vacations.

The U.S. has an excellent cross-country highway system, which includes both free and toll roads, and most streets in cities are paved.

It is possible to lead an active life without a car in some cities with well-developed public transportation systems- buses, taxies and trains- but in most areas of the country, dependence on public transportation severely limits your access to the life of your community.

Automobile drivers must be licensed in all states. When you go for you license, you must demonstrate knowledge of traffic laws and the ability to operate a car. A license from one state(such as Iowa) is valid in every other state. Most High Schools provide driver training for students and there are private driving schools for adults in most communities. A special license is required to operate large trucks and buses.

All states, including Iowa, require that automobiles be licensed each year, and you must have your car inspected to assure safety. To drive in Iowa, you must carry public liability insurance covering damage to other people or other vehicles while you are driving.

The Iowa Department of Transportation has published a drivers license test written in Laotian. Be sure to ask for this test if you don't speak English well.

Happy motoring!!

NOTICE

The Center for Applied Linguistics has published teaching material for the Tai Dam Refugees.

The series is entitled "Teaching English Pronunciation to Speakers of Black Tai(Tai Dam)". This will prove very useful to both sponsors and teachers of the Tai Dam people. There is no cost involved.

To receive this material write to:

National Indochinese Clearinghouse-
Center for Applied Linguistics
1611 North Kent Street
Arlington, Virginia 22209

Or call: 1-800-336-3040

Boy Scouts and Girl Soouts and Campfire Girls.

There are several organizations that will help children make new friends. These are the Boy Scouts, the Girl Scouts, and the Campfire Girls.

Boys aged between 8 and 18 years old may be interested in joining the Boy Scouts of America.

The Boy Scouts is an organization developed to stregnthen boys physically and mentally. It is a great way to make new friends. There is a minimal membership fee.

If you are interested contact:

Scout Executive
Mid-Iowa Council
Boy Scouts of America
4127 University Ave.
Des Moines, Iowa 50311 or call: 515-279-3648

Girls between 6 and 18 years old may be interested in the Girl Soout organization. This is an organization devoted to helping others through service projects and at the same time learning to get along with others. It is a great way for girls to make friends. A summer camp for Girl Scouts named Sacajawea, in Boone, Iowa, is available to Girl Scout members.

If you are interested, write to:

Moingona Girl Scout Council
700 6th St.
Des Moines, Iowa 50309

Another organization for girls is the Campfire Girls. Any girl between the age of 6 and 18 may join.

The Campfire Girls is a small group program where girls may develope skills and friendships with others as well as enjoy outdoor adventure.

Like the Girl Scouts, the Campfire Girls also have a summer camp. Its name is Camp Hantesa and it is also located in Boone.

For more information write to:

Campfire Girls
Hawley Welfare Bldg.
700 6th Ave.
Des Moines, Ia. 50309 or call: 515-244-1131

None of these organizations are very expensive and all of them should be looked into if you have children. They are a very worthwhile experience.

**THE AMERICAN POLITICAL SYSTEM.** (Second in a series).

**The Three Branches of Government. The Executive Branch.**

In the 1600 block of Pennsylvania Avenue in Washington, D.C., there is only one house. It is the 'White House', the home of the President of the United States. The Constitution states that no person shall be granted a title of nobility by the United States. Therefore, it is "Mr. President", one of the citizens, who lives in the White House.

The Constitution gives the President the executive power to carry out laws of the nation. It also states that the President must be a natural born American citizen, at least 35 years of age, and a resident of the United States for at least 14 years. He is elected by the citizens of the United States and serves a term of 4 years. A President can be elected no more than two times.

The President can be removed from office for doing an inadequate job and upon his removal, the Vice President takes over. The same is true upon the death of a President. The removal of the President (which has never happened) would be through a vote in the House of Representatives. I will discuss this further in a later issue of the newsletter.

The nominating procedure for a Presidential candidate is just as important in a democracy as the actual election is.

During the summer of the year in which a President is to be elected, each political party holds a national convention. You will see it take place this summer. The members of the

party in each state send delegates to the convention. They elect officers and agree on issues.

The delegates at the convention vote for their choice (as representatives of the people) and the candidate who receives a majority of the votes is nominated for the office of President. The candidate for Vice President is chosen the same way.

The Candidates conduct their campaigns until the actual election, which is held in November.

The candidate with the most votes in the election becomes the President of the United States. So you can see, the power in the United States government clearly lies with the people!

The President of the United States holds the most important elective office in the world today. He has the executive power of the nation as well as certain legislative and judicial powers.

As chief executive of the nation, the President's first duty is to see that Federal laws and treaties are enforced.

He is also Commander in Chief of the armed forces and may send them to any part of the world.

The President must answer to the American people and to Congress for the executive policies and actions. This is a heavy burden for the President so he has advisors and a 'Cabinet' to help him with his decisions. Using his authority, the President can appoint officers as heads of the executive departments. These men advise the President and serve as his

"right hand men ". These men try to always keep in touch with the President and as a rule , meet with him once a week .

Good citizens will always use their right to vote and elect a President who is an able leader , enforcer of laws , and capable of appointing able men to the cabinet positions . In the next issue , I will write about the legislative branch known as Congress .

---

## <u>ການປະກັນພັຍ</u>

ທ່ານມີເຫດຜົນຢູ່ສອງຢ່າງທີ່ຊື້ປະກັນພັຍຊີວິດຄື : ເພື່ອປະກັນຊີວິດແລະສຸຂພາບຂອງທ່ານ . ທ່ານອາດຈະມີຣົດຍົນຫລືຊັພສິນອື່ນໆທີ່ທ່ານຢາກຈະປະກັນເອົາໄວ້ . ຕົ້ນປາຍສາຍເຫດຂອງການປະກັນພັຍກໍຄືເພື່ອປ້ອງກັນທ່ານແລະຄອບຄົວຂອງທ່ານຈາກພັຍຕ່າງໆນາໆທີ່ທ່ານອາດບໍ່ຮູ້ບໍ່ເຫັນໄດ້ .

ມີຫລາຍເຫດຜົນທີ່ຄວນຊື້ປະກັນພັຍຊີວິດ . ເຫດຜົນນຶ່ງກໍຄືເພື່ອປ້ອງກັນບຸກຄົນທີ່ທ່ານຄ້ຳຊູແລະລ້ຽງເກືອເຈືອນເດັກນ້ອຍຫລືພີ່ນ້ອງເຖົ້າແກ່ເປັນຕົ້ນ .

ອີກເຫດຜົນນຶ່ງໃນການໃຫ້ມີປະກັນພັຍຊີວິດກໍຄືຊ່ວຍໃຫ້ທ່ານສາມາດຢືມເງິນໄດ້ງ່າຍ . ໃນການຊື້ປະກັນພັຍຊີວິດເຮັດໃຫ້ທ່ານໄດ້ກໍ່ຕັ້ງມີຄຸນຄ່າຂອງເງິນ ທ່ານສາມາດຢືມຈຳນວນເງິນດັ່ງກ່າວຫລືສ່ວນນຶ່ງຂອງຈຳນວນເງິນດັ່ງກ່າວນັ້ນຈາກບໍຣິສັດປະກັນພັຍພາຍໃດຫລືເພື່ອແນວໃດແນວນຶ່ງກໍໄດ້ .

ເຫດຜົນທີ່ສາມກໍຄືເພື່ອຕຽມໃນການອອກກິນເບັ້ຍບໍານານ ການກະຕຽມໄວ້ລ່ວງໜ້າສຳລັບຍາມທີ່ທ່ານບໍ່ສາມາດເຮັດວຽກເຮັດການໄດ້ເຮັດໃຫ້ເຮົາເຈົ້າດີອົກດີໃຈນໍາທ່ານໄປອີກ .

ປະກັນຊີວິດອາດຊື້ໄດ້ຈາກສາຂາຫລືບໍຣິສັດຫລືບາງເທື່ອຈາກບ່ອນທີ່ທ່ານເຮັດການນໍາ ສາຂາດີໆໂດຍພາກມີຊື່ສຽງດີ , ສະນັ້ນ ເວລາທີ່ທ່ານມີຄວາມສົນໃຈແລະຊອກຫາຕິດຕໍ່ສາຂາຕ່າງໆຂໍໃຫ້ຖາມຜູ້ຮັບຮອງຫລືນາຍຈ້າງຂອງທ່ານກ່ຽວກັບຄຳສເນີແນະຕ່າງໆ ເປັນສິ່ງສຳຄັນທີ່ສຸດທີ່ທ່ານໃຫ້ການໄວ້ເນື້ອເຊື່ອໃຈກັບຜູ້ທີ່ທ່ານຕິດຕໍ່ຊື້ປະກັນພັຍຂອງທ່ານເພາະວ່າເຂົາເວົ່າເຂົາຜູ້ນັ້ນອາດຈະເປັນທີ່ປຶກສາອັນລ້ຳຄ່າແລະອາດສາມາດຊ່ວຍທ່ານຕັດສິນໃຈໃນດ້ານເງິນຄຳໄດ້ດີກ່ອນ .

ປະກັນພັຍສຸຂພາບປ້ອງກັນທ່ານໃນການເສັຽຄ່າປິ່ນປົວຕ່າງໆຊຶ່ງອາດຈະແພງກວ່າທ່ານສາມາດຈ່າຍໄດ້ໂດຍການຈ່າຍໃຫ້ບໍຣິສັດປະກັນພັຍຢ່າງສມ່ຳສເມີ (ໂດຍທົ່ວໄປແລ້ວຈ່າຍເປັນລາຍເດືອນ) ທ່ານສາມາດກະຕຽມລາຍຈ່າຍສຳລັບການພຍາບານຕົວຂອງທ່ານໂດຍບໍ່ຈຳເປັນຈະຕ້ອງໃຫ້ພົບພໍ້ບັນຫາຕ່າງໆໃນການທີ່ຈະໄດ້ຈັບຈ່າຍນຳສິ່ງທີ່ບໍ່ຄາດຝັນເອົາໄວ້ມາກ່ອນ . ຄົນສ່ວນນ້ອຍເລືອກວິທີສ່ຽງພັຍໂດຍບໍ່ຕ້ອງຊື້ປະກັນພັຍສຸຂພາບ ດ້ວຍເຫດນີ້ແຫລະຊາວອະເມຣິກັນຈຶ່ງມີປະກັນພັຍສຸຂພາບກັນ .

ຄົນສ່ວນຫລາຍຊື້ປະກັນພັຍສຸຂພາບຈາກ "ແຜນຮ່ວມ" ແບບຊື້ແຜນຮວມນີ້ໄວ້ໃຫ້ຊື້ນຳນາຍຈ້າງຫລືອົງການຕ່າງ ໆ ປະກັນພັຍສຸຂພາບນີ້ຂາຍສຳລັບແຕ່ລະບຸກຄົນເຫມືອນກັນ ແລະອາດຊື້ໄດ້ຈາກເຈົ້າຫນ້າທີ່ປະກັນພັຍຫລືຈາກບໍຣິສັດປະກັນພັຍໂດຍກົງໂລດກໍໄດ້. ປາກົດວ່າຊື້ແບບແຜນຮ່ວມຖືກກ່ອນ ແລະອະນຸຍາດເປີດໃຫ້ຫມົດທຸກຄົນໃນກຸ່ມນັ້ນ ແຕ່ວ່າແບບແຜນດ່ຽວອາດສາມາດເຮັດໃຫ້ເຫມາະສົມກັບຄວາມຕ້ອງການຂອງແຕ່ລະບຸກຄົນໄດ້.

ແຜນຂອງປະກັນພັຍສຸຂພາບມີຢູ່ຢ່າງກວ້າງຂວາງ. ແຜນປ້ອງກັນຄ່າສິ່ງຈຳເປັນໃຫ້ຄວາມປ້ອງກັນແກ່ທ່ານໃນການເສັຽຄ່າພຍາບານຕົວເລັກ ໆ ນ້ອຍໆ, ຄ່າຜ່າຕັດ ແລະຄ່າການຮັບໃຊ້ປິ່ນປົວຂອງທ່ານຫມໍ. ແຜນປ້ອງກັນຄ່າການປິ່ນປົວທີ່ສຳຄັນແລະເຫິງນານ, ເສັຽຄ່າສຳລັບການຮັກສາເຈັບເປັນທຸກປະເພດທີ່ຢູ່ໃນຫລືນອກໂຮງພຍາບານ.

ຄົນສ່ວນຫລາຍຊື້ແຜນປ້ອງກັນຄ່າສິ່ງຈຳເປັນແລະແຜນປ້ອງກັນຄ່າການປິ່ນປົວທີ່ສຳຄັນເພື່ອປ້ອງກັນໃຫ້ຄົບຖ້ວນ.

ຖ້າທ່ານມີຄວາມຖາມຕ່າງ ໆ ຂໍໃຫ້ຕິດຕໍ່ສອບຖາມໄດ້ນຳເຈົ້າຫນ້າທີ່ປະກັນພັຍປະຈຳບ່ອນທີ່ທ່ານເຮັດການໄດ້. ຖ້າບໍ່ເຂົ້າໃຈຂໍໃຫ້ຖາມ ເພາະວ່າການປະກັນພັຍບໍ່ເປັນຂອງງ່າຍແຕ່ເປັນສິ່ງທີ່ອາດເຂົ້າໃຈໄດ້ ຂໍໃຫ້ສອບຖາມເຖິງແຜນຕ່າງ ໆ ທີ່ເຂົາເຈົ້າມີຊຶ່ງອາດຈະເຫມາະສົມແກ່ຄວາມຕ້ອງການ ແລະທີ່ທ່ານສາມາດເສັຽໄດ້.

<u>ການຂົນສົ່ງ: ສິ່ງທີ່ເຮັດໃຫ້ອະເມຣິກາເຫນັງຕີງໄດ້</u>.

ໃນສະຫະຣັດອະເມຣິກາ, ຣົດເປັນສິ່ງສຳຄັນທີ່ນຳພາຊ່ອງທາງໃຫ້ຄົນໄດ້ຢູ່ໄດ້ກິນ ແຕ່ລະຄອບຄົວທັງຫລາຍໃຊ້ຣົດຍົນເພື່ອຂັບໄປເຮັດວຽກເຮັດການ ໄປເລາະຊື້ເຄື່ອງ ໄປຢ້ຽມຢາມພີ່ນ້ອງ ແລະໄປພັກຜ່ອນຢ່ອນອາຣົມ ຕາມນອກເມືອງຕ່າງ ໆ.

ສະຫະຣັດອະເມຣິກາມີຣະບົບຖນົນພາຍໃນຣັດທີ່ດີເລີດຊຶ່ງມີທາງຖນົນໃຫຍ່ທີ່ບໍ່ມີການເສັຽຄ່າ ແລະມີທັງເສັຽຄ່າທຳນຽມໃນການໃຊ້, ແລະຖນົນສ່ວນຫລາຍຢູ່ຕາມເມືອງຕ່າງ ໆ ກໍມີການປູຢາງກັນທັງນັ້ນ.

ເປັນສິ່ງທີ່ເຮັດໄດ້ໂດຍບໍ່ຕ້ອງມີຣົດໃນການຈະໄປຈະມາໄດ້ຢ່າງສະດວກສະບາຍດີ ໃນເມືອງໃຫຍ່ທີ່ມີຣະບົບການຂົນສົ່ງທີ່ດີເຊັ່ນ ການຣົດເມ, ຕັກຊີ ແລະຣົດໄຟ. ແຕ່ວ່າໃນເຂດທົ່ວ ໆ ໄປພາຍໃນປະເທດແລ້ວແມ່ນເປັນການລຳບາກທີ່ສຸດນຳການໄປມາຫາສູ່ ຖ້າຈະໄປອາສັຍນຳແຕ່ການຄົມມະນາຄົມດັ່ງກ່າວນັ້ນ.

ໃນທຸກ ໆ ຣັດ, ຄົນຂັບຂີ່ຣົດທຸກຊນິດຈະຕ້ອງມີໃບຂັບຂີ່. ເມື່ອທ່ານໄປຂໍໃບຂັບຂີ່ ທ່ານຈະຕ້ອງສາມາດຮູ້ເຖິງກົດຈາຣະຈອນແລະສາມາດຂັບຣົດໄດ້ດີ ໃບຂັບຂີ່ຈາກຣັດນຶ່ງ (ເຊັ່ນຈາກຣັດໄອໂອວາ) ໃຊ້ໄດ້ໃນທຸກ ໆ ຣັດ - ທີ່ໂຮງຮຽນມັທຍົມຕ່າງ ໆ ສ່ວນຫລາຍມີການຝຶກແອບຂັບຣົດໃຫ້ນັກຮຽນ ແລະກໍມີໂຮງຮຽນຂັບຣົດເອກຊົນເຊັ່ນດຽວກັນສຳລັບຜູ້ໃຫຍ່ຕາມທ້ອງຖິ່ນຕ່າງ ໆ. ໃບຂັບຂີ່ພິເສດຕ່າງຫາກມີໃຫ້ສຳລັບຜູ້ຂັບຂີ່ຣົດໃຫຍ່ຕ່າງໆ.

ຣົດຢູ່ໃນທຸກໆຣັດສ່ວນຫຼັງຣັດໄອໂອວາ ຈະຕ້ອງໃຫ້ມີປ້າຍສຳລັບແຕ່ລະປີ ແລະທ່ານຈະຕ້ອງເອົາຣົດຂອງທ່ານໄປກວດ ເພື່ອປ້ອງກັນຄວາມປອດພັຍ. ກ່ອນຈະຂັບຣົດໃນຣັດໄອໂອວາ ທ່ານຈະຕ້ອງມີປະກັນພັຍສຳລັບເພື່ອປ້ອງກັນຄວາມເສັຽຫາຍຕ່າງໆໃຫ້ຜູ້ອື່ນແລະຣົດຄົນອື່ນໃນຍາມທ່ານຂັບຂີ່.

ພແນກຂົນສົ່ງຂອງຣັດໄອໂອວາໄດ້ຈັດພິມໃບການສອບເສັງເອົາໃບຂັບຂີ່ເປັນພາສາລາວໄວ້ແລ້ວ - ຖ້າພວກທ່ານບໍ່ເຂົ້າໃຈພາສາອັງກິດດີກໍຂໍໃຫ້ສອບຖາມຂໍເສັງເປັນພາສາລາວກໍໄດ້.

ຂໍໃຫ້ໂຊກດີໃນການຂັບຂີ່!

<u>ປະກາດ</u>.

ສູນກາງອັກສອນສາດປະຍຸກໄດ້ພິມເອກສານສຳລັບຊາວອົພຍົບໄທດຳ ເອກສານດັ່ງກ່າວມີຊື່ວ່າ "ການສອນສຳນຽງອັງກິດໃຫ້ຜູ້ທີ່ປາກໄທດຳ" ຊຶ່ງອາດຈະເປັນປະໂຍດສຳລັບຜູ້ຮັບຮອງແລະນາຍຄູຊາວໄທດຳ ການຂໍເອກສານດັ່ງກ່າວບໍ່ມີການເສັຽຄ່າຫຍັງແລະເພື່ອສົ່ງຂໍໃຫ້ຂຽນຫາ:

National Indochinese Clearinghouse.
Center for Applied Linguistics,
1611 North Kent Street
Arlington, Virginia 22209
ຫລັກຕິດສາຍ: 1-800-336-3040

<u>ສະກຸດຊາຍ ແລະຍິງແລະ Campfire ຍິງ</u>.

ມີອົງການຢູ່ຫລາຍໆອົງການທີ່ຈະໃຫ້ຄວາມຊ່ວຍເຫລືອແກ່ເດັກນ້ອຍໃນການຜູກຫມູ່ເພື່ອນໃຫມ່ ມີຄືສະມາຄົມສະກຸດຊາຍ, ສະກຸດຍິງແລະແຄມຟາຍຍິງເປັນຕົ້ນ.

ເດັກຊາຍອາຍຸຣະຫວ່າງ ໘ ຫາ ໑໘ ປີອາດສົນໃຈເຂົ້າຮ່ວມສະມາຄົມສະກຸດຊາຍແຫ່ງອະເມຣິກາ.

ສະມາຄົມສະກຸດຊາຍເປັນອົງການທີ່ຈັດຕັ້ງຂຶ້ນເພື່ອອຸ້ມຊູສົ່ງເສີມດ້ານຮ່າງກາຍແລະດ້ານຈິດໃຈຂອງເດັກຊາຍເປັນວິທີທາງທີ່ດີໃນການຜູກມິດແລະລ້ຽງຄ້ຽງຫມູ່ໃຫມ່ ມີການເສັຽຄ່າທຳນຽມຕ່ຳສຸດເພື່ອເຂົ້າເປັນສະມາຊິກ ຖ້າພວກທ່ານສົນໃຈຂໍໃຫ້ຕິດຕໍ່:

Scout Executive,
Mid-Iowa Council,
Boy Scouts of America,
4127 University Ave, Des Moines, Iowa 50311.
ຫລັກຕິດສາຍ: 515-279-3648

ເດັກຍິງອາຍຸຣະຫວ່າງ ໕ ຫາ ໑໕ ປີ ອາດຈະສົນໃຈນຳອົງການສະກຸດຍິງຊຶ່ງເປັນອົງການທີ່ອຸທິດການຊ່ອຍເຫລືອໃຫ້ຜູ້ອື່ນດ້ວຍໂຄງການກິຈກັມຊ່ອຍເຫລືອຕ່າງໆ ພ້ອມທັງສັ່ງສອນວິທີຕ່າງ ໆ ໃນການລີ້ງແຄ່ມກັບຜູ້ອື່ນ ໆ . ອັນເປັນຊ່ອງທາງທີ່ດີເລີດສຳລັບເດັກຍິງ ໃນການລີ້ງແຄ່ມໝູ່ຄູ່ໃໝ່ . Sacajawea ທີ່ Boone , Iowa ເປັນສູນກາງຫລິ້ນຍາມຮ້ອນຂອງສະມາຄົມສະກຸດຍິງ ແລະຈັດໄວ້ສຳລັບສະມາຊິກສະກຸດຍິງທຸກໆຄົນ .

ຖ້າສົນໃຈຂໍໃຫ້ຂຽນຫາ :

Moingona Girl Scout Council
700 - 6th Street ,

Des Moines , Iowa 50309

ອົງການນຶ່ງອີກສຳລັບເດັກຍິງກໍຄື Campfire ຍິງ ເດັກຍິງທີ່ມີອາຍຸແຕ່ ໗ ຫາ ໑໕ ປີສາມາດສມັກເຂົ້າເປັນສະມາຊິກໄດ້.

Campfire ຍິງເປັນການຈັດຕັ້ງປະກອບດ້ວຍກຸ່ມນ້ອຍ ໆ ທີ່ເດັກຍິງທັງຫລາຍສາມາດຮຽນຮູ້ຄຳຊຳນິຊຳນານ ແລະການເປັນໝູ່ເພື່ອນຊຶ່ງກັນແລະກັນໄດ້ດີແລະທັງມີໂອກາດໄດ້ຮ່ອນຊອນນຳກິຈກັມພາຍນອກຕ່າງໆອີກ -

ເຊັ່ນດຽວກັນກັບສະກຸດຍິງ, Campfire ຍິງມີສູນກາງຫລິ້ນໃນຍາມຮ້ອນຊຶ່ງມີຊື່ວ່າ Camp Hantesa ແລະຕັ້ງຢູ່ທີ່ Boone ເໝືອນກັນ .

ເພື່ອລາຍລະອຽດຕ່າງໆ ຕິດຕໍ່:

Campfire Girls
Hawley Welfare Bldg
700 - 6th Ave.
Des Moines , Iowa 50309 ຫລືໂທຣະສັບ: 515-244-1181

ການເຂົ້າເປັນສະມາຊິກສະມາຄົມດັ່ງກ່າວນີ້ບໍ່ເປັນການສິ້ນເປືອງເງິນຄຳເທົ່າໃດ. ຖ້າທ່ານມີເດັກນ້ອຍ (ລູກເຕົ້າ) ທ່ານຄວນສອບຖາມ ແລະຕິດຕໍ່ຖາມລາຍລະອຽດຕ່າງ ໆ ຊຶ່ງຖືວ່າເປັນການປະສົບການ ອັນລ້ຳຄ່າໃຫ້ແກ່ທ່ານໄປອີກ .

## ຣະບົບການເມືອງອະເມຣິກັນ ( ບົດທີສອງ)

### ສາມພແນກ (ສາຂາ) ຂອງຣັຖບານ- ພແນກບໍຣິຫານ .

ຕັ້ງຢູ່ໃນຄຸ້ມເລກທີ່ 1600 ຂອງຖນົນ Pennsylvania ໃນ Washington D.C. ມີອາຄານຢູ່ຫລັງດຽວ

ເທົ່ານັ້ນຄື " ທຳນຽບຂາວ" ຊຶ່ງເປັນເຮືອນຂອງປະທານາທິບໍດີສະຫະຣັດອະເມຣິກາ . ຢູ່ໃນຣັຖທັມມະນູນໄດ້ເວົ້າໄວ້ວ່າບໍ່ມີຜູ້ໃດຈະມີສິດໄດ້ຕຳແໜ່ງເປັນຂຸນນາງໃນສະຫະຣັດອະເມຣິກາ ດັ່ງນັ້ນຈຶ່ງໄດ້ເອີ້ນວ່າ "ທ່ານປະທານາທິບໍດີ" ຊຶ່ງເປັນພົລເມືອງຜູ້ນຶ່ງໃນຈຳນວນພົລເມືອງທັງຫລາຍເທົ່ານັ້ນທີ່ຢູ່ໃນທຳນຽບຂາວ.

ຣັຖທັມມະນູນໄດ້ໃຫ້ສິດບໍຣິຫານແກ່ປະທານາທິບໍດີເພື່ອດຳເນີນການໃນດ້ານກົດໝາຍຂອງປະເທດ. ຣັຖທັມມະນູນໄດ້ບັ່ງໄວ້ອີກວ່າ ຜູ້ທີ່ເປັນປະທານາທິບໍດີນັ້ນຈະຕ້ອງເປັນສັນຊາດທີ່ເກີດໃນສະຫະຣັດອະເມຣິກາ, ມີອາຍຸ 35 ປີ ແລະໄດ້ຢູ່ໃນສະຫະຣັດອະເມຣິກາຢ່າງນ້ອຍ 14 ປີ. ປະທານາທິບໍດີຖືກຄັດເລືອກເອົາໂດຍປະຊາຊົນຊາວອະເມຣິກັນ ແລະຮັບໃຊ້ກຳໜົດເວລາ 4 ປີ. ປະທານາທິບໍດີຜູ້ນຶ່ງມີສິດເລືອກຕັ້ງໄດ້ບໍ່ໃຫ້ກາຍສອງຄັ້ງ.

ປະທານາທິບໍດີອາດຖືກໄລ່ອອກການໄດ້ຖ້າເຮັດວຽກການບໍ່ສຳເຣັດຜົນ ແລະຖ້າມີການຖືກໄລ່ອອກຈາກຕຳແໜ່ງ ແມ່ນຮອງປະທານາທິບໍດີເປັນຜູ້ຂຶ້ນແທນຊຶ່ງເຊັ່ນດຽວກັນກັບຖ້າມີການເສັຽຊີວິດຂອງປະທານາທິບໍດີ. ການປລົດຕຳແໜ່ງປະທານາທິບໍດີ (ຊຶ່ງບໍ່ເຄີຍມີມາກ່ອນ) ເຮັດໄດ້ໂດຍຜ່ານການລົງຄະແນນສຽງໃນສະພາຕ່ຳ ຂ້າພະເຈົ້າຂໍເອົາໄວ້ບັນລະຍາຍກ່ຽວກັບເຣື່ອງນີ້ໃນສະບັບຕໍ່ໄປ.

ວິທີການຄັດເລືອກເອົາຜູ້ສມັກຮັບເລືອກຕັ້ງເປັນປະທານາທິບໍດີເປັນສິ່ງສຳຄັນຍິ່ງໃນລະບົບປະຊາທິປະໄຕ ເໝືອນກັນກັບການເລືອກຕັ້ງອັນແທ້ຈິງນັ້ນເອງ.

ໃນລະຫວ່າງຍາມຮ້ອນຂອງປີປະທານາທິບໍດີຈະຖືກເລືອກຕັ້ງນັ້ນ ແຕ່ລະພັກການເມືອງຈະໄດ້ຈັດໃຫ້ມີການປະຊຸມຂຶ້ນ ຊຶ່ງທ່ານອາດຈະໄດ້ຮູ້ເຫັນຍາມຣະດູຮ້ອນປີນີ້ເອງ ສະມາຊິກຂອງພັກການເມືອງໃນແຕ່ລະຣັດສົ່ງຜູ້ຕາງໜ້າເຂົ້າຮ່ວມປະຊຸມດັ່ງກ່າວຊຶ່ງເຂົາເຈົ້າຈະຄັດເລືອກເອົາຄະນະເຈົ້າໜ້າທີ່ ແລະຕົກລົງບັນຫາຕ່າງໆ.

ຜູ້ຕາງໜ້າຂອງກອງປະຊຸມລົງມັດຕິເອົາຜູ້ທີ່ເຂົາຄັດເລືອກເອົາ (ເປັນຜູ້ຕາງໜ້າຂອງປະຊຸມ) ແລະຜູ້ຮັບສມັກເລືອກຕັ້ງທີ່ໄດ້ຮັບຄະແນນສຽງສ່ວນຫລາຍຈະຖືກແຕ່ງຕັ້ງສຳລັບຕຳແໜ່ງເປັນປະທານາທິບໍດີ. ຜູ້ທີ່ຈະສມັກຮັບເລືອກຕັ້ງເປັນຮອງປະທານາທິບໍດີກໍ່ຖືກຄັດເລືອກໃນທຳນອງດຽວນີ້.

ຜູ້ທີ່ສມັກເລືອກຕັ້ງຈຶ່ງອອກດຳເນີນການໂຄສນາຫາສຽງຈົນກວ່າຈະເຖິງຍາມເລືອກຕັ້ງແທ້ຊຶ່ງມີຂຶ້ນໃນເດືອນພຶສຈິກາ. ຜູ້ສມັກເລືອກຕັ້ງທີ່ໄດ້ຄະແນນສຽງສ່ວນຫລວງໃນການເລືອກຕັ້ງນັ້ນຈະໄດ້ເປັນປະທານາທິບໍດີຂອງສະຫະຣັດອະເມຣິກາ ດັ່ງທ່ານອາດຈະເຫັນໄດ້ວ່າອິດທິພົນຂອງຣັຖບານສະຫະຣັດອະເມຣິກາແມ່ນຂຶ້ນຢູ່ກັບປະຊາຊົນເອງ ປະທານາທິບໍດີສະຫະຣັດອະເມຣິກາມີຕຳແໜ່ງທີ່ຖືກເລືອກຕັ້ງເອົາ ແລະສຳຄັນທີ່ສຸດໃນໂລກປະຈຸບັນ - ປະທານາທິບໍດີເປັນຜູ້ມີອິດທິພົນທາງດ້ານບໍຣິຫານຂອງປະເທດຮ່ວມທັງອິທິພົນທາງດ້ານນິຕິບັນຍັດ ແລະດ້ານຕຸລາການອີກດ້ວຍ.

ໃນຖານະເປັນຫົວໜ້າຝ່າຍບໍຣິຫານຂອງປະເທດ ໜ້າທີ່ທີ່ນຶ່ງຂອງປະທານາທິບໍດີກໍ່ຄືເບິ່ງນຳເຣື່ອງການ

ເຄົາຣົບນັບຖືກົດໝາຍຣັຖບານກາງແລະສັນຍາຕ່າງໆ . ເຊ່ນ ປະທານາທິບໍດີອີກທີ່ເປັນຜູ້ບັງຄັບ ທະຫານສູງສຸດແລະອາດຈະສັ່ງທະຫານໄປແຫ່ງໃດໃນໂລກກໍໄດ້ .

ປະທານາທິບໍດີຈະຕ້ອງຕອບສນອງແກ່ປະຊາຊົນແລະຣັຖສະພາ ທີ່ກ່ຽວກັບປະຕິກິຣິຍາ ແລະ ນະໂຍບາຍຕ່າງໆ ໃນການບໍຣິຫານ ສິ່ງເຫລົ່ານີ້ເປັນວຽກການອັນໜັກໜ່ວງຂອງປະທານາທິບໍດີ . ສະນັ້ນ ປະທານາທິບໍດີຈຶ່ງມີທີ່ປຶກສາ ແລະ ຄນະຣັຖບານ ທີ່ໃຫ້ການຊົດຊ່ອຍ ໃນດ້ານການຕັດສິນຕ່າງໆ ໂດຍການໃຊ້ສິດທິຂອງທ່ານເອງ ປະທານາທິບໍດີສາມາດແຕ່ງຕັ້ງເຈົ້າໜ້າທີ່ມາເປັນຫົວໜ້າ ພະແນກບໍຣິຫານຕ່າງໆອີກ ຊຶ່ງເຈົ້າໜ້າທີ່ດັ່ງກ່າວລາຍງານຄວາມສເນີແນະໃຫ້ປະທານາທິບໍດີ ແລະ ຮັບໃຊ້ເປັນຄົນມືຂວາຂອງປະທານາທິບໍດີ ເຈົ້າໜ້າທີ່ດັ່ງກ່າວ ຈະຕ້ອງເຂົ້າພົບພໍ້ກັບ ປະທານາທິບໍດີ ຢູ່ເລື້ອຍໆ ແລະ ຕາມກົດແລ້ວ ຈະຕ້ອງເຂົ້າພົບພໍ້ຄັ້ງນຶ່ງຕໍ່ອາທິດ .

ພົລເມືອງທີ່ດີທັງຫລາຍ ຈະຕ້ອງໃຊ້ສິດຂອງຕົນເລືອກຕັ້ງ ແລະ ຄັດເລືອກເອົາປະທານາທິບໍດີຜູ້ທີ່ມີລັກສນະເປັນຜູ້ນຳ ຜູ້ທີ່ຮູ້ໃຊ້ກົດໝາຍ ແລະ ຜູ້ທີ່ມີຄວາມສາມາດ ຄັດເລືອກແຕ່ງຕັ້ງເອົາຄນະຣັຖບານທີ່ມີຄວາມສາມາດ . ໃນສະບັບຕໍ່ໄປ ຂ້າພະເຈົ້າຈະໄດ້ຂຽນເຖິງເຣື່ອງພະແນກ (ສາຂາ) ນິຕິບັນຍັດຊຶ່ງເອີ້ນວ່າຣັຖສະພາ .

GOVERNOR'S TASK FORCE
FOR INDOCHINESE RESETTLEMENT
1000 EAST GRAND
DES MOINES, IOWA 50319

Bulk Rate
U.S. Postage Paid
Des Moines, Ia.
Permit No. 1195

State Library
Historical Bldg.
Des Moines, Iowa 50319